ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 60 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 06 MAR 2014

<u>ແຈ້ງການ</u>

**ເຖິງ:** ບັນດາກົມ-ຫ້ອງການ ຂອງ ທຫລ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານ ເອກະຊົນ ໃນທົ່ວປະເທດ.

**ເລື່ອງ:** ການສ້າງຂະບວນການແຂ່ງຂັນຮອບດ້ານ ເພື່ອຕ້ອນຮັບກອງປະຊຸມໃຫຍ່ອົງຄະນະພັກ ທຫລ ຄັ້ງທີ III, ກອງປະຊຸມໃຫ່ຍສູນກາງພັກ ຄັ້ງທີ X ແລະ ວັນສະຖາປານາ ສປປ ລາວ ຄົບຮອບ 40 ປີ.

- ອີງຕາມບົດແນະນໍາຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 229/ຄຈສພ ລົງວັນທີ 23/5/2011 ກ່ຽວກັບການຈັດຕັ້ງປະຕິບັດດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີວຽກງານ ແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່;
- ອີງຕາມແຈ້ງການຂອງກະຊວງພາຍໃນ ເລກທີ 43/ພນ ລົງວັນທີ 11/6/2013 ກ່ຽວກັບການສ້າງຂະບວນການຮອບ ດ້ານ ເພື່ອຕ້ອນຮັບກອງປະຊຸມໃຫຍ່ຂອງອົງຄະນະພັກຂັ້ນຕ່າງໆ ໃນທົ່ວປະເທດ;
- ອີງຕາມທິດຊີ້ນໍາຂອງຄະນະປະຈໍາພັກ ທຫລ ລົງວັນທີ 03/3/2014.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ການສ້າງຂະບວນການແຂ່ງຂັນຕ້ອນຮັບວັນສໍາຄັນຕ່າງໆຂ້າງເທິງ ໄດ້ຮັບຜົນດີ ແລະ ເປັນຂະບວນຟົດຟື້ນ ຈຶ່ງແຈ້ງມາຍັງທ່ານ ເພື່ອສ້າງຂະບວນການແຂ່ງຂັນຂອງກົມກອງຕົນ ດັ່ງລາຍລະອຽດລຸ່ມນີ້:

**I. ຈຸດປະສົງລະດັບຄາດໝາຍຂອງການສ້າງຂະບວນການແຂ່ງຂັນ:**

1. ເພື່ອປຸກລະດົມສະມາຊິກພັກ-ພະນັກງານ ໃນທົ່ວຂະແໜງການທະນາຄານ ປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນຂະບວນການແຂ່ງຂັນ **"ຮັກຊາດ ແລະ ພັດທະນາ ຕິດພັນກັບການຮັກສາສະຖຽນລະພາບທາງດ້ານເງິນຕາ ແລະ ການສະໜອງທຶນເຂົ້າໃນການແກ້ໄຂຄວາມທຸກຍາກ**";

2. ບົນພື້ນຖານບວນການແຂ່ງຂັນດັ່ງກ່າວ ເພື່ອສ້າງສະມາຊິກພັກ-ພະນັກງານໃຫ້ມີສະຕິຊາດ, ສະຕິເອກະລາດ, ເປັນເຈົ້າຕົນເອງ, ມີຈິດໃຈປະຢັດມັດທະຍັດ, ມີຄວາມດຸໝັ່ນຄົ້ນຄວ້າຮໍ່າຮຽນ, ດຸໝັ່ນໃນການອອກແຮງງານ, ຍົກສູງສະຕິຕື່ນຕົວ, ນໍ້າໃຈບຸກບືນ ແລະ ສ້າງໃຫ້ມີຕົວແບບດີເດັ່ນກ້າວໜ້າ; ເພື່ອເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງຂອງສະມາຊິກພັກ-ພະນັກງານ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າ;

3. ເພື່ອຊຸກຍູ້ສົ່ງເສີມວຽກດີ-ຄົນເດັ່ນ ໂດຍຜ່ານຂະບວນການແຂ່ງຂັນທີ່ມີການຈັດຕັ້ງ, ມີເນື້ອໃນ ແລະ ຄາດໝາຍສູ້ຊົນຢ່າງຈະແຈ້ງ; ຜ່ານຂະບວນການແຂ່ງຂັນ ຕ້ອງເລືອກໃຫ້ໄດ້ບຸກຄົນ ແລະ ການຈັດຕັ້ງທີ່ໄດ້ອຸທິດເຫື່ອແຮງ, ສະຕິປັນຍາ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການແຂ່ງຂັນຢ່າງສະເໝີຕົ້ນສະເໝີປາຍ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ ແລະ ການຈັດຕັ້ງ ເພື່ອຍ້ອງຍໍສັນລະເສີນຢ່າງສົມກຽດ.

**II.ຫຼັກການຂອງການແຂ່ງຂັນ:**

1. ຕ້ອງຮັບປະກັນຫຼັກການລວມສູນປະຊາທິປະໄຕ, ມີຄວາມສະເໝີພາບ ແລະ ຍຸດຕິທຳ;

2. ຕ້ອງກຳນົດຈຸດປະສົງ, ຄາດໝາຍ, ເນື້ອໃນ, ມາດຖານ, ໄລຍະເວລາ ແລະ ວິທີການໃຫ້ຈະແຈ້ງ;

3. ຕ້ອງມີຄວາມຕື່ນຕົວ, ເປັນເຈົ້າການ, ມີຄວາມສາມັກຄີ, ຮ່ວມມື ເພື່ອພ້ອມກັນພັດທະນາ, ຖືເອົາການແຂ່ງຂັນເປັນໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;

4. ຕ້ອງຢູ່ໃນຂອບເຂດ ແລະ ກົດໝາຍລັດຖະທຳມະນູນ ແລະ ກົດໝາຍທີ່ໄດ້ກຳນົດໄວ້;

5. ການແຂ່ງຂັນຕ້ອງຕິດພັນກັບການຍ້ອງຍໍສັນລະເສີນ, ຕ້ານທັດສະນະທີ່ບໍ່ມີຂະບວນການດີເດັ່ນ, ບໍ່ມີຜົນງານຕົວຈິງ ແຕ່ພັດສະເໜີຂໍການຍ້ອງຍໍ.

**III. ເນື້ອໃນ, ຄາດໝາຍ, ຂັ້ນຕອນ ແລະ ຮູບການຂອງການແຂ່ງຂັນ:**

**1. ເນື້ອໃນຂອງການແຂ່ງຂັນ ລວມມີ 4 ເນື້ອໃນຕົ້ນຕໍ:**

ແຂ່ງຂັນການປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ; ປະຕິບັດບັນດາຄາດໝາຍທາງດ້ານເສດຖະກິດ ແລະ ການບໍລິການ; ຄາດໝາຍທາງດ້ານວັດທະນະທຳ-ສັງຄົມ ແລະ ຂົງເຂດວຽກພັກ-ພະ ນັກງານ, ການບູລະນະລະບົບການຈັດຕັ້ງ.

**2. ຄາດໝາຍຂອງການແຂ່ງຂັນ ປະກອບມີ 4 ຄາດໝາຍລວມ ແລະ 4 ບຸກທະລຸ ດັ່ງນີ້:**

**ກ. ຄາດໝາຍລວມ:**

- **ໃຫ້ໄວ:** ໝາຍວ່າ ສະມາຊິກພັກ-ພະນັກງານທຸກຄົນ, ກົມກອງ-ທຽບເທົ່າກົມກອງ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ທຸກພາກສ່ວນ ຕ້ອງແຂ່ງຂັນສູ້ຊົນປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ສຳເລັດຕາມຄາດໝາຍ ຫຼື ສຳເລັດກ່ອນຄາດໝາຍທີ່ໄດ້ກຳນົດໄວ້, ບໍ່ຊັກຊ້າ, ບໍ່ທ່ວງດຶງແກ່ຍາວເວລາ, ທັງປະຢັດເວລາ, ວັດຖຸ, ທຶນຮອນ, ກາລັງຄົນ ແລະ ອື່ນໆ;
- **ໃຫ້ດີ:** ໝາຍວ່າ ສະມາຊິກພັກ-ພະນັກງານທຸກຄົນ, ກົມກອງ-ທຽບເທົ່າກົມກອງຂອງ ທຫລ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ທຸກພາກສ່ວນ ຕ້ອງແຂ່ງຂັນປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ມີຜົນສຳເລັດດີ, ການຈັດຕັ້ງເຂັ້ມແຂງ, ໜັກແໜ້ນ ແລະ ປອດໃສ; ມີການຄົ້ນຄວ້ານຳໃຊ້ເຕັກນິກ ແລະ ເຕັກໂນໂລຢີຮັບໃຊ້ພາຍໃນສຳນັກງານອົງການ ແລະ ສັງຄົມຢ່າງມີຄຸນນະພາບ, ໄດ້ມາດຕະຖານ ແລະ ໄດ້ຮັບຄວາມນິຍົມ;
- **ໃຫ້ຫຼາຍ:** ໝາຍວ່າ ສະມາຊິກພັກ-ພະນັກງານທຸກຄົນ, ກົມກອງ-ທຽບເທົ່າກົມກອງ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ທຸກພາກສ່ວນ ຕ້ອງແຂ່ງຂັນປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ໄດ້ຕາມຄາດໝາຍ ຫຼື ລື່ນຄາດໝາຍທີ່ວາງໄວ້ ແລະ ມີການຂະຫຍາຍຕົວຫຼາຍຂຶ້ນເລື້ອຍໆ;
- **ໃຫ້ຖືກກົດໝາຍ:** ໝາຍວ່າ ສະມາຊິກພັກ-ພະນັກງານທຸກຄົນ, ກົມກອງ-ທຽບເທົ່າກົມກອງ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ທຸກພາກສ່ວນຕ້ອງມີການແຂ່ງຂັນເພື່ອພັດທະນາສຳນັກງານອົງການ ພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນກ້າວໜ້າ, ແຕ່ການພັດທະນາຕ້ອງບົນພື້ນຖານແນວທາງ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ຕໍ່ລະບອບລະບຽບຕ່າງໆ ທີ່ລັດໄດ້ວາງອອກ, ຮັບປະກັນຄວາມສະເໝີພາບ, ມີຄວາມສາມັກຄີ, ຍຸຕິທຳ ບໍ່ສວຍໃຊ້ຂະບວນການແຂ່ງຂັນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ບໍ່ສ້າງສິ່ງທີ່ຂັດກັບລະບຽບກົດໝາຍ.

**ຂ. ເນື້ອໃນຈິດໃຈ 4 ບຸກທະລຸ:** ບຸກທະລຸທາງດ້ານຈິນຕະນາການ, ບຸກທະລຸທາງດ້ານການພັດທະນາ

ຊັບພະຍາກອນມະນຸດ, ບຸກທະລຸທາງດ້ານການແກ້ໄຂລະບອບ, ລະບຽບການບໍລິຫານ ແລະ ບຸກທະລຸທາງດ້ານການແກ້ໄຂຄວາມທຸກຍາກ.

**3. ຂັ້ນຕອນການແຂ່ງຂັນ:**

3.1 ກ່ອນອື່ນໝົດແຕ່ລະກົມ, ທຽບເທົ່າກົມຂອງ ທຫລ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ຕ້ອງກຳນົດຈຸດປະສົງ, ຄາດໝາຍ ແລະ ເນື້ອໃນຂອງການແຂ່ງຂັນຂອງກົມກອງຕົນຢ່າງລະອຽດຈະແຈ້ງ, *ການກຳນົດຈຸດປະສົງ ແລະ ເນື້ອໃນຂອງການແຂ່ງຂັນແມ່ນເພື່ອແນໃສ່ຊຸກຍູ້ການສ້າງບາດກ້າວບຸກທະລຸທັງ 4 ດ້ານໃຫ້ແຂງແຮງກວ່າເກົ່າ ເພື່ອປະຕິບັດບັນດາຄາດໝາຍສູ້ຊົນທີ່ວາງໄວ້; ໂດຍສະເພາະແມ່ນຄາດໝາຍການແກ້ໄຂຄວາມທຸກຍາກ ແລະ ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາໃນປີ 2015, ເພື່ອປະກອບສ່ວນ ດ້ານຕ່າງໆ ໃນການສ້າງບ້ານພັດທະນາ, ຊຸກຍູ້ວຽກງານ 3 ສ້າງ.* ບົນພື້ນຖານການຫັນເປັນອັນລະອຽດໃຫ້ແທດເໝາະກັບແຕ່ລະຂົງເຂດ ແລະ ຄວາມຮັບຜິດຊອບຂອງຕົນ;

3.2 ການກຳນົດຄຳຂວັນແຂ່ງຂັນ, ນອກຈາກຄຳຂວັນລວມແລ້ວ ບັນດາກົມ, ທຽບເທົ່າກົມຂອງ ທຫລ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ **ຕ້ອງກຳນົດຄຳຂວັນເປັນອັນສະເພາະກົມກອງຕົນ ໂດຍໃຫ້ສອດຄ່ອງກັບໜ້າທີ່ການເມືອງ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;**

3.3 ກຳນົດມາດຖານ ແລະ ເງື່ອນໄຂຂອງການແຂ່ງຂັນຢ່າງລະອຽດຈະແຈ້ງ, ມີການກຳນົດໄລຍະເວລາທີ່ແນ່ນອນ, ມາດຖານ ແລະ ເງື່ອນໄຂຕ້ອງກຳນົດໃຫ້ຊັດເຈນ ເຮັດໃຫ້ຜູ້ຈັດຕັ້ງປະຕິບັດເຂົ້າໃຈງ່າຍ ແລະ ໄດ້ຮັບຜົນດີ;

3.4 ປຸກລະດົມ ແລະ ຊີ້ນຳການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ ຊຶ່ງເປັນຂັ້ນຕອນສຳຄັນທີ່ສຸດ. ສະນັ້ນ, ການປຸກລະດົມຂະບວນການແຂ່ງຂັນຕ້ອງກຳແໜ້ນຈຸດປະສົງຄາດໝາຍ ທີ່ໄດ້ກຳນົດໄວ້ໃນດຳລັດເລກທີ 121/ນຍ ລົງວັນທີ 24/02/2010 ເພື່ອເປັນບ່ອນອີງໃນການວາງແຜນການເຄື່ອນໄຫວຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;

3.5 ການສະຫຼຸບຕີລາຄາຂະບວນການແຂ່ງຂັນ ແມ່ນວຽກທີ່ສຳຄັນ. ສະນັ້ນ, ການສະຫຼຸບຕ້ອງຊັດເຈນ ໂດຍເລີ່ມຈາກຂະບວນຂອງຮາກຖານ ຫຼື ໜ່ວຍງານ ເພື່ອເປັນບ່ອນອີງໃນການສະຫຼຸບ, ການເລືອກຕົວແບບທີ່ກ້າວໜ້າ, ບຸກຄົນ ແລະ ກົມກອງດີເດັ່ນ.

**4. ຮູບການແຂ່ງຂັນ:**

4.1 **ແຂ່ງຂັນປົກກະຕິ:** ແມ່ນຮູບການແຂ່ງຂັນໂດຍອີງໃສ່ພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບທີ່ໄດ້ຮັບການມອບໝາຍໃຫ້ບຸກຄົນ ກໍ່ຄືການຈັດຕັ້ງ ເພື່ອຈັດຕັ້ງປະຕິບັດໃນແຕ່ລະຂົງເຂດວຽກງານເປັນແຕ່ລະວັນ, ແຕ່ລະເດືອນ, ແຕ່ລະໄຕມາດ ແລະ ແຕ່ລະປີ ບົນຈິດໃຈຄຳຂວັນ **"ຮັກຊາດ ແລະ ພັດທະນາ ຕິດພັນກັບການຮັກສາສະຖຽນລະພາບທາງດ້ານເງິນຕາ ແລະ ການສະໜອງທຶນເຂົ້າໃນການແກ້ໄຂຄວາມທຸກຍາກ"**.

ຮູບການແຂ່ງຂັນປົກກະຕິ ແມ່ນນຳໃຊ້ເຂົ້າໃນການແຂ່ງຂັນລະຫວ່າງບຸກຄົນຕໍ່ບຸກຄົນ ແລະ ລະຫວ່າງກົມກອງນີ້ກັບກົມກອງອື່ນທີ່ຢູ່ໃນອົງການດຽວກັນ ທີ່ມີພາລະບົດບາດ, ໜ້າທີ່ຄ້າຍຄືກັນ ຫຼື ລະຫວ່າງອົງການນີ້ກັບອົງການອື່ນ ເພື່ອວາງຂໍ້ແຂ່ງຂັນ.

**4.2 ການແຂ່ງຂັນຕາມແຕ່ລະປັ້ນ:** ແມ່ນຮູບການແຂ່ງຂັນຕາມຫົວຂໍ້, ຕາມຄຳສັ່ງຊຶ່ງໄດ້ກຳນົດໄລຍະເວລາລະອຽດ ແນໃສ່ແຂ່ງຂັນເພື່ອແກ້ໄຂໜ້າທີ່ວຽກງານອັນຈຳເປັນທີ່ສຳຄັນ ແລະ ຮີບດ່ວນ ຊຶ່ງເປັນພາລະກິດລວມ.

ພະນັກງານ-ສະມາຊິກພັກ, ບັນດາກົມ, ທຽບເທົ່າກົມຂອງ ທຫລ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ທີ່ຈະເຂົ້າຮ່ວມຂະບວນການແຂ່ງຂັນໃນບັ້ນດັ່ງກ່າວ ຕ້ອງໄດ້ລົງທະບຽນຢ່າງລະອຽດຈະແຈ້ງ. ພາກສ່ວນໃດຫາກບໍ່ໄດ້ລົງທະບຽນແຂ່ງຂັນແມ່ນຈະບໍ່ໄດ້ຮັບການພິຈາລະນາຮູບແບບການຍ້ອງຍໍ ແລະ ນາມມະຍົດການແຂ່ງຂັນຕ່າງໆ.

ການລົງທະບຽນແຂ່ງຂັນ ໝາຍວ່າ: ພະນັກງານ-ສະມາຊິກພັກ, ບັນດາກົມ, ທຽບເທົ່າກົມຂອງ ທຫລ, ທະນາຄານທຸລະກິດລັດ-ລັດຫຸ້ນສ່ວນ ແລະ ທະນາຄານເອກະຊົນ ທີ່ເຂົ້າຮ່ວມການແຂ່ງຂັນຕ້ອງລົງລາຍເຊັນໃສ່ເອກະສານແຂ່ງຂັນ ທີ່ກົມຈັດຕັ້ງແລະພະນັກງານໄດ້ກະກຽມໄວ້ແລ້ວ ທັງນີ້ກໍ່ເພື່ອຄວາມເປັນເອກະພາບ ແລະ ຄວາມສະດວກໃນການຕີລາຄາຜົນງານຂອງບຸກຄົນ ແລະ ການຈັດຕັ້ງ.

ກະລຸນາສົ່ງເນື້ອໃນການແຂ່ງຂັນມາຍັງກົມຈັດຕັ້ງແລະພະນັກງານ **ບໍ່ກາຍໃນວັນທີ 14/3/2014 ຖ້າກາຍກຳນົດເວລາດັ່ງກ່າວ ຖືວ່າສະຫຼະສິດ ຫຼື ບໍ່ໄດ້ລົງທະບຽນແຂ່ງຂັນ.**

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ.ປ.ປ.ລາວ ★ ກົມຈັດຕັ້ງແລະພະນັກງານ

ບຸນຕາ ດາຣາວົງ